ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ກັນຍາ 2026
ປີທີ 15
ສະບັບທີ 1081

## ກອງປະຊຸມປະທານລັດຖະສະພາສາກົນ ຄັ້ງທີ 2 ທີ່ພະນົມເປັນ




(ສພຊ) - ລະຫວ່າງວັນທີ 26-28 ສິງຫາ 2026, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດແຫ່ງ ສປປລາວ ນຳໂດຍທ່ານ ນາງ ສູນທອນ ໄຊຍະຈັກ ຮັກສາການແທນປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມກອງປະຊຸມປະທານລັດຖະສະພາສາກົນ ຄັ້ງທີ 2 ພາຍໃຕ້ຫົວຂໍ້: "ຄວາມສາມັກຄີ ເພື່ອສັນຕິພາບ ແລະ ຄວາມຈະເລີນ

ອ່ານຕໍ່ໜ້າ 4



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການສ້າງພັກ ຕ້ອງຖືເປັນສຳຄັນທັງການສ້າງຈຳນວນ ແລະ ດ້ານຄຸນນະພາບ, ແຕ່ຕ້ອງເອົາດ້ານຄຸນນະພາບເປັນກົກເຄົ້າ ເພື່ອຮັບປະກັນລັກສະນະຊົນຊັ້ນກຳມະກອນ ແລະ ລັກສະນະນຳໜ້າຕໍ່ສູ້ຂອງພັກ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 158)

ອ່ານຕໍ່ສະບັບໜ້າ

## ຄະນະຜູ້ແທນສະພາແຫ່ງຊາດລາວ ຢ້ຽມຂ່ຳນັບປະທານສະພາແຫ່ງຊາດກຳປູເຈຍ



(ສພຊ) - ວັນທີ 27 ສິງຫາ 2026, ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດແຫ່ງ ສປປລາວ ນຳໂດຍທ່ານ ນາງ ສູນທອນ ໄຊຍະຈັກ ຮັກສາການແທນປະທານສະພາແຫ່ງຊາດ ໄດ້ເຂົ້າຢ້ຽມຂ່ຳນັບສົມເດັດມະຫາຣັດຖະສະເພຍທິກາ

ອ່ານຕໍ່ໜ້າ 4

## ປາຖະກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 35 ປີ

(ສພຊ) - ເພື່ອສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 35 ປີ (15 ສິງຫາ 1991-15 ສິງຫາ 2026) ແລະ ເຮັດໃຫ້ພະນັກງານ-ລັດຖະກອນ ໄດ້ຍົກສູງຄວາມຮັບຮູ້, ເຂົ້າໃຈ ແລະ ເຫັນໄດ້ຄວາມສຳຄັນຂອງວັນດັ່ງ

ອ່ານຕໍ່ໜ້າ 4




## ສ້າງຄວາມເຂັ້ມແຂງໃຫ້ ສສຂ ດ້ານພາວະຄວາມເປັນຜູ້ນຳ ແລະ ການມີສ່ວນຮ່ວມກັບປະຊາຊົນ




(ສພຊ) - ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງດ້ານພາວະຄວາມເປັນຜູ້ນຳແລະການມີສ່ວນຮ່ວມກັບປະຊາຊົນໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 26-28 ສິງຫາ 2026 ທີ່ເມືອງວັງວຽງ ແຂວງວຽງຈັນ

ອ່ານຕໍ່ໜ້າ 8

## ສະຖານທູດສິງກະໂປ ຈັດງານ ສະຫຼອງວັນຊາດ ຄົບຮອບ 61 ປີ




(ສພຊ) - ວັນທີ 27 ສິງຫານີ້, ສະຖານທູດສິງກະໂປປະຈຳລາວ ຈັດງານສະເຫຼີມສະຫຼອງວັນຊາດສິງກະໂປ ຄົບຮອບ 61 ປີ (09/8/1965-09/8/2026) ໂດຍມີທ່ານ ວິໄລວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ, ບັນດາການນຳຂັ້ນສູງຂອງກະຊວງ ແລະ ອົງການ, ທູຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວ ພ້ອມດ້ວຍແຂກຖືກເຊີນ ເຂົ້າຮ່ວມ.

ທ່ານ ອອງ ຊຽວ ເກ (Ong Siew Gay) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດສິງກະໂປ ປະຈຳ ສປປລາວ ກ່າວວ່າ: ງານສະເຫຼີມສະຫຼອງວັນຊາດສິງກະໂປໃນປີນີ້ ມີຄວາມໝາຍສຳຄັນພິເສດ ເນື່ອງຈາກພວກເຮົາຍັງຢູ່ໃນບັນຍາກາດສະເຫຼີມສະຫຼອງຄົບຮອບ 25 ປີ ຄູ່ຮ່ວມມືເພື່ອການພັດທະນາ ລະຫວ່າງ ສ.ສິງກະໂປ ແລະ ສປປລາວ;ພ້ອມກັນນີ້,ຍັງ

ອ່ານຕໍ່ໜ້າ 8

## ຫສຊ ຕິດຕາມ ແລະ ຊຸກຍູ້ວຽກງານຢູ່ 7 ແຂວງ




(ສພຊ) - ລະຫວ່າງວັນທີ 23 ສິງຫາ ຫາ 1 ກັນຍາ 2026, ທ່ານ ບຸນຈັນ ສີວົງພັນ ກຳມະການສູນກາງພັກ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ (ຫສຊ) ພ້ອມດ້ວຍຄະນະ

ອ່ານຕໍ່ໜ້າ 5

## ກວດກາເນື້ອໃນຮ່າງກົດໝາຍການປົກປ້ອງເງິນຝາກ




(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ28-29ສິງຫາ 2026 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເຂົ້າຮ່ວມເປັນປະທານແລະກ່າວເປີດຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ, ມີທ່ານ ຈັນທະບູນ ສຸກອາລຸນ ປະທານກຳມາທິການເສດຖະກິດ ແລະ ການເງິນ ພ້ອມດ້ວຍບັນດາທ່ານຮອງປະທານກຳມາທິການສະພາແຫ່ງຊາດ, ຮອງຜູ້ວ່າການທະນາຄານແຫ່ງ ສປປລາວ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ຕະຫຼອດຮອດພະນັກງານ-ລັດຖະກອນຈາກພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ເນັ້ນໜັກເຖິງຄວາມໝາຍຄວາມສຳຄັນຂອງກອງປະຊຸມເນື່ອງຈາກເປັນການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ ເຊິ່ງໃນໄລຍະຜ່ານມາການຈັດຕັ້ງປະຕິບັດວຽກງານດັ່ງກ່າວແມ່ນອີງໃສ່ດຳລັດວ່າດ້ວຍການປົກປ້ອງເງິນຝາກເທົ່ານັ້ນ ຈຶ່ງເຫັນວ່າຍັງມີຫຼາຍບັນຫາທີ່ເປັນຂໍ້ຈຳກັດແລະສ້າງຄວາມຫຍຸ້ງຍາກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກ ໂດຍສະເພາະແມ່ນທີ່ຕັ້ງຂອງສຳນັກງານປົກປ້ອງເງິນຝາກ ຍັງມີລັກສະນະຄຸມເຄືອ ເຊິ່ງເຮັດໃຫ້ການເຄື່ອນໄຫວວຽກງານຂອງສຳນັກງານປົກປ້ອງເງິນຝາກ ຍັງບໍ່ທັນຄ່ອງຕົວ ແລະ ສັງຄົມກໍຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບສະຖານະພາບແລະການເຄື່ອນໄຫວວຽກງານຂອງສຳນັກງານປົກປ້ອງເງິນຝາກ, ການໝູນໃຊ້ຫຼັກການສາກົນກ່ຽວກັບລະບົບປະກັນໄພເງິນຝາກທີ່ມີປະສິດທິຜົນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຄົບຖ້ວນ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກຍັງພົບຄວາມຫຍຸ້ງຍາກ, ທະນາຄານທຸລະກິດ ຍັງບໍ່ສາມາດປະຕິບັດດຳລັດໄດ້ຢ່າງເຕັມສ່ວນ, ການສ້າງຄວາມຮັບຮູ້ໃຫ້ແກ່ສັງຄົມຕໍ່ກັບວຽກງານປົກປ້ອງເງິນຝາກ ຍັງບໍ່ທັນຈັດຕັ້ງປະຕິບັດໄດ້ຢ່າງທົ່ວເຖິງ; ສະນັ້ນ, ກອງປະຊຸມຄັ້ງນີ້ ຈະໄດ້ຄົ້ນຄວ້າຢ່າງລະອຽດ, ຮອບດ້ານ ຕິດພັນກັບການຈັດຕັ້ງປະຕິບັດຕົວຈິງ ເພື່ອເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍ ມີຄວາມຄົບຖ້ວນ, ຮັດກຸມ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍອື່ນທີ່ປະກາດໃຊ້ແລ້ວ ແລະ ສາມາດແກ້ໄຂບັນຫາທີ່ເກີດຂຶ້ນໃນການຈັດຕັ້ງປະຕິບັດຕົວຈິງ.

ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າປະກອບຄຳເຫັນຕໍ່ເນື້ອໃນຮ່າງກົດໝາຍທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການຕົນ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດ.

ພາຍຫຼັງສຳເລັດກອງປະຊຸມຄັ້ງນີ້, ຄະນະຮັບຜິດຊອບຈະໄດ້ລາຍງານຜົນສຳເລັດຂອງການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍສະບັບນີ້ຕໍ່ກອງປະຊຸມ ຄປຈສພຊ ປະຈຳເດືອນກັນຍາກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ທີ່ຈະຈັດຂຶ້ນໃນທ້າຍປີນີ້.

**(ນາງອານິຕາ ມ່ວນສະຫວັດ)**



## ການສຳມະນາຂອງສະມາຊິກລັດຖະສະພາ ສປຈີນ-ອາຊຽນ ຄັ້ງທີ 3



(ສພຊ) - ລະຫວ່າງວັນທີ 20-26 ສິງຫາ 2026, ທ່ານ ໂພສີ ເຕັມເມລາດ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ18ແຂວງໄຊສົມບູນ, ຮອງປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍທ່ານ ນາງ ມີນາ ສີວິໄລ ສສຊ ປະຈຳເຂດເລືອກຕັ້ງທີ15ແຂວງຈຳປາສັກ, ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ທ່ານ ພອນສານ ວິໄລເມັ້ງ ສສຊ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ແລະຄະນະຊ່ວຍວຽກລວມທັງໝົດ5ທ່ານ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາຂອງສະມາຊິກລັດຖະສະພາ ສປຈີນ-ອາຊຽນ ຄັ້ງທີ 3 ພາຍໃຕ້ຫົວຂໍ້ "ເພີ່ມທະວີການແລກປ່ຽນລະຫວ່າງອີງການນິຕິບັນຍັດ, ຊຸກຍູ້ການສ້າງສາຍພົວພັນຍຸດທະສາດຮອບດ້ານລະຫວ່າງ ຈີນ-ອາຊຽນ" ແລະ ການທັດສະນະສຶກສາຢູ່ນະຄອນຫຼວງປັກກິ່ງ ແລະ ແຂວງໄຫໜານ, ສປຈີນ ຕາມການເຊື້ອເຊີນ ເຊິ່ງມີ 10 ປະເທດສະມາຊິກອົງການສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ພ້ອມທັງເລຂາທິການໃຫຍ່ໄອປາ ເຂົ້າຮ່ວມ.

ກອງປະຊຸມໄດ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນ ສະແດງອອກເຖິງຄວາມໝາຍຄວາມສຳຄັນຂອງການພົວພັນຮ່ວມມືລະຫວ່າງລັດຖະສະພາອາຊຽນເວົ້າລວມ, ເວົ້າສະເພາະສະພາແຫ່ງຊາດລາວ ກັບສະພາຜູ້ແທນປະຊາຊົນທົ່ວປະເທດຈີນ;ເປັນການແລກປ່ຽນບົດຮຽນ, ການຮັດແໜ້ນຄວາມສາມັກຄີແລະການຮ່ວມມືຂອງບັນດາປະເທດອາຊຽນໃນຫົວຂໍ້ທີ່ສຳຄັນ ໂດຍມີການບັນລະຍາຍຂອງການນຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ແລະ ບັນດາອາຈານຜູ້ຊົງຄຸນວຸດທິຂອງມະຫາວິທະຍາໄລທຸລະກິດ ແລະ ເສດຖະກິດສາກົນ ສປຈີນ. ພ້ອມນັ້ນ, ຍັງໄດ້ມີການແລກປ່ຽນຄຳຄິດເຫັນຢ່າງມີສ່ວນຮ່ວມຈາກບັນດາຜູ້ແທນທີ່ເຂົ້າຮ່ວມຕໍ່ຫົວຂໍ້ດັ່ງນີ້: 1. ທັດສະນະແນວຄວາມຄິດຂອງທ່ານປະທານ ສີ ຈິ້ນຜິງ ກ່ຽວກັບລັດທິສັງຄົມນິຍົມທີ່ມີລັກສະນະພິເສດຂອງຈີນໃນຍຸກໃໝ່, 2. ການເສີມສ້າງການຮ່ວມມືດ້ານພະລັງງານສະອາດ ແລະຮ່ວມກັນສ້າງປະເທດຊາດຈີນ-ອາຊຽນໃຫ້ສວຍສົດງົດງາມ, 3. ການສ້າງເຄືອຂ່າຍເຊື່ອມໂຍງ-ເຊື່ອມຈອດແບບກວ້າງຂວາງເພື່ອເປີດເສັ້ນທາງການພັດທະນາສຳລັບອາຊີ, 4. ການສົ່ງເສີມການເຊື່ອມໂຍງ-ເຊື່ອມຈອດດ້ານດິຈິຕອນ ແລະ ການສ້າງເສັ້ນທາງສາຍໄໝດິຈິຕອນ,5.ການສ້າງຄວາມເຂັ້ມແຂງໃນການຮ່ວມມືດ້ານກະສິກຳ ແລະ ການເພີ່ມຂີດຄວາມສາມາດໃນການຟື້ນຕົວ ແລະ ຄວາມຍືນຍົງຂອງການພັດທະນາດ້ານກະສິກຳ.

ພາຍຫຼັງສຳເລັດກອງປະຊຸມ, ຄະນະຜູ້ແທນໄດ້ເຄື່ອນໄຫວຢ້ຽມຢາມ ແລະ ຢ້ຽມຊົມພື້ນຖານເສດຖະກິດ ແລະ ສະຖານທີ່ທາງວັດທະນະທຳ ແລະ ປະຫວັດສາດ ຂອງນະຄອນຫຼວງປັກກິ່ງ ເປັນຕົ້ນ: ຫໍພິພິທະພັນພັກກອມມູນິດຈີນ, ພະລາຊະວັງຕ້ອງຫ້າມ, ກຳແພງເມືອງຈີນ, ສູນອະນຸລັກພະລັງງານ ແລະ ປົກປ້ອງສິ່ງແວດລ້ອມປັກກິ່ງ, ສູນການຄ້າຫຸ່ນຍົນ, ບັນດາບໍລິສັດທາງດ້ານເຕັກໂນໂລຊີ, ສະຖາບັນວິທະຍາສາດກະສິກຳເຂດຮ້ອນຂອງຈີນແລະອື່ນໆ. ຄະນະຜູ້ແທນຍັງໄດ້ຢ້ຽມຢາມແຂວງໄຫໜານ ໂດຍໄດ້ຮັບການຕ້ອນຮັບຈາກການນຳຂັ້ນສູງຂອງແຂວງ ແລະ ໄດ້ເຂົ້າຮ່ວມພົບປະແລກປ່ຽນກັບການນຳສະພາຜູ້ແທນປະຊາຊົນແຂວງ; ຈາກນັ້ນ, ໄດ້ໄປຢ້ຽມຊົມສະຖານທີ່ທາງປະຫວັດສາດຂອງແຂວງ ເປັນຕົ້ນ: ສູນການພັດທະນາທ່າເຮືອການຄ້າເສລີໄຫໜານ, ຫໍພິພິທະພັນປະຕູສູ່ການຄ້າໂລກ, ສູນວາງສະແດງນະວັດຕະກຳທາງການແພດສາກົນແບບຍືນຍົງ-ສູນຮັກສາສຸຂະພາບ ໂບອາວ ອີຫຼົງ, ຫໍປະຊຸມໃຫຍ່ ໂບອາວ ອາຊີ, ແລະ ຢ້ຽມຢາມສະຖານີປ່ອຍຍານອະວະກາດ ເຫວີນຊາງ.

# ເຊື່ອມຊຶມນິຕິກຳ ສສ ເພດຍິງ ແລະ ເອກະສານສຳຄັນ



(ສພຂ) - ຕອນບ່າຍທີ 16 ກໍລະກົດຜ່ານມາ, ໜ່ວຍຮາກຖານສະຫະພັນແມ່ຍິງ ສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ໄດ້ເຜີຍແຜ່, ເຊື່ອມຊຶມນິຕິກຳກ່ຽວກັບສະມາຊິກສະພາ (ສສ) ເພດຍິງ ແລະ ເອກະສານວັນສຳຄັນຕ່າງໆ ຂອງຊາດ, ຂອງພັກ ໂດຍການເປັນປະທານຂອງສະຫາຍ ນາງ ວັນນາ ພົມວິສອນຮອງເລຂາໜ່ວຍພັກ ສພຂ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ; ມີບັນດາສະຫາຍສະມາຊິກສະຫະພັນແມ່ຍິງ ພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງເພື່ອແນໃສ່ຍົກສູງຄວາມຮັບຮູ້ແລະຄວາມເຂົ້າໃຈ ໃຫ້ແກ່ສະມາຊິກສະຫະພັນແມ່ຍິງ ກໍຄືພະນັກງານ-ລັດຖະກອນຕໍ່ກັບບົດບາດ, ໜ້າທີ່ ທີ່ພົວພັນເຖິງການຊຸກຍູ້, ສົ່ງເສີມບົດບາດຍິງ-ຊາຍ ເວົ້າລວມ, ເວົ້າສະເພາະແມ່ນການສະໜັບສະໜູນ ແລະ ພັດທະນາຂີດຄວາມສາມາດ ຂອງ ສສ ເພດຍິງ ໃຫ້ມີຄວາມເຂັ້ມແຂງແລະສາມາດປະຕິບັດໜ້າທີ່ການເມືອງຂອງຕົນຢ່າງມີປະສິດທິຜົນ;

ໃນພິທີໄດ້ຮັບຟັງການເຜີຍແຜ່ເອກະສານມູນເຊື້ອວັນສຳຄັນຕ່າງໆ ຂອງພັກ ແລະ ຂອງຊາດ ເພື່ອສ້າງຄວາມສາມັກຄີຮັກຊາດ, ຄຸນສົມບັດສິນທຳປະຕິວັດ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ; ສະຫາຍ ນາງ ວັນນາ ພົມວິສອນ ໄດ້ເນັ້ນໜັກໃຫ້ເອົາໃຈໃສ່ຄົ້ນຄວ້າ, ກຳແໜ້ນເນື້ອໃນຈິດໃຈຂອງນິຕິກຳ ຢ່າງເລິກເຊິ່ງ ແລະ ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການປະຕິບັດວຽກງານຕົວຈິງໃຫ້ເກີດດອກອອກຜົນ, ເພື່ອສ້າງຂະບວນການຂອງໜ່ວຍຮາກຖານສະຫະພັນແມ່ຍິງ ສພຂ ໃຫ້ມີຄວາມຟົດຟື້ນ ແລະ ເຂັ້ມແຂງຮອບດ້ານໃນຕໍ່ໜ້າ.

**(ສພຂ ໄຊຍະບູລີ)**

# ຫສຂ ໄຊຍະບູລີ ໄດ້ຮັບຄອມພິວເຕີ



(ສພຂ) - ວັນທີ 22 ກໍລະກົດຜ່ານມາ ທີ່ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງໄຊຍະບູລີ ໄດ້ມີພິທີມອບ-ຮັບຄອມພິວເຕີ ມູນຄ່າ 11 ລ້ານກວ່າກີບ ເພື່ອຮັບໃຊ້ເຂົ້າໃນວຽກງານ ການເຄື່ອນໄຫວວຽກງານວິຊາສະເພາະຂອງຫ້ອງວ່າການສະພາປະຊາຊົນແຂວງ (ຫສຂ) ໃຫ້ມີຄວາມສະດວກ,ວ່ອງໄວແລະທັນສະໄໝຍິ່ງຂຶ້ນ; ກ່າວມອບໂດຍ ທ່ານ ຄຳໄຊ ເລົ່າລີ ເຕຊາ ຫົວໜ້າຫ້ອງການຄະນະກຳມະການສົ່ງເສີມແລະຄຸ້ມ ຄອງການລົງທຶນແຂວງໄຊຍະບູລີ ແລະ ກ່າວຮັບໂດຍທ່ານເສັງວິໄລສິງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ພ້ອມດ້ວຍບັນດາຄະນະຮັບຜິດຊອບພະນັກງານ-ລັດຖະກອນຂອງທັງສອງຝ່າຍເຂົ້າຮ່ວມຢ່າງພ້ອມພຽງ.

# ແລກປ່ຽນບົດຮຽນວຽກແຮງງານ ແລະ ສະຫວັດດີການສັງຄົມ



(ສພຂ) - ວັນທີ 15 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງຫົວພັນ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ຮ່ວມກັບພະແນກແຮງງານແລະສະຫວັດດີການສັງຄົມແຂວງ ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນກ່ຽວກັບວຽກງານແຮງງານແລະສະຫວັດດີການສັງຄົມແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ພອນສີ ໄຊຍະບຸນ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມແລະຊົນເຜົ່າ ແລະ ທ່ານ ແປ້ນ ໄຊຍະທຳ ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ; ເຂົ້າຮ່ວມມີຮອງຫົວໜ້າພະແນກ; ຫົວໜ້າຫ້ອງການປະກັນສັງຄົມ, ຫົວໜ້າ-ຮອງຫົວໜ້າຂະແໜງການຕະຫຼອດຮອດວິຊາການທັງສອງພາກສ່ວນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ, ສັງຄົມທີ່ຕິດພັນກັບວຽກງານຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງ6ເດືອນທ້າຍປີ2026 ການຈັດຕັ້ງປະຕິບັດຄາດໝາຍລະດັບຊາດ ຕາມກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແບ່ງປັນ ແລະ ມະຕິ ສະພາປະຊາຊົນແຂວງຮັບຮອງ ໃນໄລຍະຜ່ານມາເຊິ່ງເຫັນໄດ້ຜົນງານສຳເລັດໃນການຈັດຕັ້ງປະຕິບັດບັນດາຄາດໝາຍ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ທັງນີ້ເພື່ອປຶກສາຫາລື,ຄົ້ນຄວ້າຊຸກຍູ້ຕິດຕາມ, ກວດກາ ບັນດາຂະແໜງການທີ່ກ່ຽວຂ້ອງທີ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ທັງແລກປ່ຽນຄວາມຄິດຄຳເຫັນ ເຊິ່ງກັນ ແລະ ກັນ ຢ່າງກົງໄປກົງມາ ເປັນຕົ້ນແມ່ນການຄຸ້ມຄອງແຮງງານພາຍໃນ ແລະ ຕ່າງປະເທດ, ການພັດທະນາສີມືແຮງງານ; ການຈັດຫາວຽກເຮັດງານທຳໃຫ້ແຮງງານພາຍໃນແຂວງ; ການອອກບັດ ແລະ ຕໍ່ບັດອອກແຮງງານ ໃຫ້ແຮງງານຕ່າງປະເທດທີ່ມາອອກແຮງງານຢູ່ແຂວງ; ການຂະຫຍາຍຜູ້ເຂົ້າປະກັນສັງຄົມ; ການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານຄຸນງາມຄວາມດີ, ເສຍສະຫຼະຊີວິດ ເພື່ອປະເທດຊາດໃນເມື່ອກ່ອນ; ການເກັບກູ້ລະເບີດອອກຈາກພື້ນທີ່ການພັດທະນາ ແລະ ອື່ນໆ.

ຕອນທ້າຍ, ປະທານກອງປະຊຸມຍັງໄດ້ເນັ້ນໜັກໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານຂອງຕົນຮັບຜິດຊອບ ພ້ອມທັງປະຕິບັດໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມລະບຽບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ ຢ່າງເຂັ້ມງວດ, ເພີ່ມທະວີໃນການປະສານສົບທົບທັງພາຍໃນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ໄປໃນທິດທາງດຽວກັນ ແລະ ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ ຕົວເລກຄາດໝາຍໃນ 6 ເດືອນທ້າຍປີ ໃຫ້ມີຜົນສຳເລັດແລະຖືກຕ້ອງຕາມຂັ້ນຕອນກົດໝາຍ ແລະ ລະບຽບການທີ່ວາງໄວ້.

# ສພຂ ຫົວພັນ ເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ຢູ່ 3 ເມືອງ



(ສພຂ)-ວັນທີ21-23 ກໍລະກົດຜ່ານມາ, ສະພາປະຊາຊົນແຂວງ(ສພຂ) ຫົວພັນ ໄດ້ເຄື່ອນໄຫວເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຢູ່ 3ເມືອງຄື:ເມືອງຫົວເມືອງ, ເມືອງຮ້ຽມ ແລະ ເມືອງຊ່ອນ ໂດຍການເຜີຍແຜ່ຂອງທ່ານ ຮຸ່ງອາລຸນ ບຸນທະເມືອງ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງ; ມີບັນດາຄະນະນຳຂອງເມືອງ, ປະທານຕາແສງຢູ່ເທສະບານເມືອງ ພ້ອມດ້ວຍພະນັກງານ-ລັດຖະກອນ, ນາຍ-ພົນທະຫານ, ນາຍ-ພົນຕຳຫຼວດ ເຂົ້າຮ່ວມ 468 ຄົນ, ຍິງ 157ຄົນ.

ທັງນີ້ເພື່ອສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງຕື່ມ ກ່ຽວກັບເນື້ອໃນ,ຄວາມໝາຍແລະຄວາມສຳຄັນ ຂອງລັດຖະທຳມະນູນ ແລະ ກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ.

ໃນພິທີ, ທ່ານ ພັອ. ທອງພັນພັດທະວົງປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ), ກົດໝາຍ ແລະ ຍຸຕິທຳ ແລະ ທ່ານທອນສຸກເພັດວິຍານຮອງປະທານຄະນະກຳມະການ ປກຊ-ປກສ, ກົດໝາຍ ແລະ ຍຸຕິທຳ ໄດ້ພັດປ່ຽນກັນຂຶ້ນເຜີຍແຜ່ ໂດຍຍົກເອົາບາງໝວດ ແລະ ບາງມາດຕາ ມາອະທິບາຍແລະສົມທຽບໃສ່ວຽກງານຕົວຈິງ ທີ່ໄດ້ເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດໃນໄລຍະຜ່ານມາ; ພ້ອມນັ້ນ, ຍັງໄດ້ເປີດໂອກາດໃຫ້ສົນທະນາ, ແລກປ່ຽນຄວາມຄິດເຫັນ ເຊິ່ງກັນ ແລະ ກັນ.

ທ່ານ ຮຸ່ງອາລຸນ ບຸນທະເມືອງ ໄດ້ເນັ້ນໜັກໃຫ້ພ້ອມກັນນຳເອົາບົດຮຽນທີ່ໄດ້ຮັບໄປຄົ້ນຄວ້າ ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງ ແລະ ກຳແໜ້ນບັນດາໝວດ, ມາດຕາຕ່າງໆ

ອ່ານຕໍ່ໜ້າ 5






## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຮຸ່ງເຮືອງຮ່ວມກັນ: ການເສີມສ້າງກົດໝາຍສາກົນ ແລະການແກ້ໄຂຂໍ້ຂັດແຍ້ງດ້ວຍສັນຕິວິທີ" ທີ່ນະຄອນຫຼວງພະນົມເປັນ, ລາຊະອານາຈັກກຳປູເຈຍ; ກອງປະຊຸມຄັ້ງນີ້ ຈັດຂຶ້ນພາຍໃຕ້ການເປັນເຈົ້າພາບຂອງລັດຖະສະພາກຳປູເຈຍ, ມີຄະນະຜູ້ແທນທີ່ນຳໂດຍປະທານ, ຮອງປະທານ ແລະ ສະມາຊິກລັດຖະສະພາ ຈາກ 25 ປະເທດ ແລະ ອົງການລັດຖະສະພາສາກົນ5 ອົງການ, ລວມຫຼາຍກວ່າ 175 ທ່ານ ເຂົ້າຮ່ວມ.

ໃນການເຂົ້າຮ່ວມກອງປະຊຸມ, ທ່ານນາງສູນທອນ ໄຊຍະຈັກ ຫົວໜ້າຄະນະຜູ້ແທນລາວ ໄດ້ກ່າວປາໄສຕໍ່ກອງປະຊຸມ ໂດຍຕີລາຄາສູງຕໍ່ຫົວຂໍ້ກອງປະຊຸມ "ຄວາມສາມັກຄີ ເພື່ອສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ: ການເສີມສ້າງກົດໝາຍສາກົນແລະການແກ້ໄຂຂໍ້ຂັດແຍ້ງດ້ວຍສັນຕິວິທີ" ເຊິ່ງມີຄວາມສຳຄັນ ແລະ ຈຳເປັນຫຼາຍ ໃນໄລຍະທີ່ໂລກພວມປະເຊີນກັບສິ່ງທ້າທາຍຫຼາຍຢ່າງ, ໂດຍທ່ານໄດ້ຍົກໃຫ້ເຫັນເຖິງຜົນກະທົບທີ່ໜັກໜ່ວງຈາກສົງຄາມທຳລາຍ ເຊິ່ງ ສປປລາວ ເປັນປະເທດທີ່ຖືກຖິ້ມລະເບີດລູກຫວ່ານຫຼາຍກວ່າໝູ່ໃນໂລກ; ດັ່ງນັ້ນ, ຄຸນຄ່າຂອງສັນຕິພາບ, ຄວາມສາມັກຄີ, ຄວາມໄວ້ເນື້ອເຊື່ອໃຈກັນ ແລະ ການເສີມຂະຫຍາຍການຮ່ວມມື ເພື່ອພ້ອມກັນພັດທະນາ ໂດຍຖືເອົາປະຊາຊົນເປັນກົກຈຶ່ງເປັນສິ່ງສຳຄັນ ແລະ ໃນໄລຍະ 50 ປີຜ່ານມາ ລັດຖະບານລາວ ໄດ້ຍຶດໝັ້ນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາຢ່າງສະເໝີຕົ້ນສະເໝີປາຍ ແລະ ມີການຮ່ວມມືກັບປະຊາຄົມໂລກໃນຄວາມພະຍາຍາມແກ້ໄຂຜົນກະທົບຂອງລະເບີດຕົກຄ້າງບໍ່ທັນແຕກຫຼາຍສິບລ້ານໜ່ວຍ ເຊິ່ງພວມສືບຕໍ່ດັບສູນຊີວິດຂອງປະຊາຊົນ ແລະ ເປັນອຸປະສັກຕໍ່ການພັດທະນາແບບຍືນຍົງຢູ່ ສປປລາວ ຈົນເຖິງປັດຈຸບັນ. ທ່ານຍັງໄດ້ເນັ້ນໜັກຕໍ່ກອງປະຊຸມເຖິງຄວາມໝາຍໝັ້ນຂອງ ສປປລາວ ໃນການຮ່ວມມືກັບປະຊາຊາດໃນໂລກ ແລະການດຳເນີນການທູດລັດຖະສະພາ ເພື່ອສ້າງຄວາມເຂົ້າໃຈ, ຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມສາມັກຄີ, ສ້າງສະພາບແວດລ້ອມເອື້ອອຳນວຍແກ່ສັນຕິພາບ, ການຮ່ວມມື, ການເຊື່ອມໂຍງເຊື່ອມຈອດໃນພາກພື້ນ ເພື່ອຫັນ ສປປລາວ ຈາກປະເທດບໍ່ມີຊາຍແດນຕິດກັບທະເລເປັນປະເທດເຊື່ອມໂຍງເຊື່ອມຈອດກັບພາກພື້ນຕ່າງໆ.

ພ້ອມດຽວກັນນັ້ນ, ຫົວໜ້າຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ຮ່ວມກັບຫົວໜ້າຄະນະຜູ້ແທນປະເທດອື່ນໆ ເຂົ້າຢ້ຽມຂໍ່ານັບສົມເດັດ ພະບໍລົມມະນຽດ ໂນໂຣດົມ ສີຫາໂມນີ ພະມະຫາກະສັດ ແຫ່ງລາຊະອານາຈັກກຳປູເຈຍ, ຢ້ຽມຂໍ່ານັບສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຊ ຮຸນເຊັນ ປະທານສະພາສູງກຳປູເຈຍ ແລະ ຢ້ຽມຂໍ່ານັບສົມເດັດ ມະຫາບໍວອນທິພາດີ ຮຸນ ມາເນັດ ນາຍົກລັດຖະມົນຕີກຳປູເຈຍ.

ນອກຈາກນັ້ນ, ໃນລະຫວ່າງການເຂົ້າຮ່ວມກອງປະຊຸມ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ຖືໂອກາດພົບປະສອງຝ່າຍກັບຄະນະຜູ້ແທນຈາກລັດຖະສະພາປະເທດເພື່ອນມິດຕ່າງໆ ເຊັ່ນ: ຮອງປະທານສະພາແຫ່ງຊາດຫວຽດນາມ, ປະທານສະພາແຫ່ງຊາດ ແລະ ປະທານກຳມາທິການການຕ່າງປະເທດສະພາແຫ່ງຊາດກຳປູເຈຍ, ປະທານສະພາແຫ່ງຊາດເນປານ ແລະ ພົບປະໂອ້ລົມກັບຜູ້ແທນປະເທດອື່ນໆຈຳນວນໜຶ່ງ ເພື່ອປຶກສາຫາລືກ່ຽວກັບການພົວພັນຮ່ວມມືສອງຝ່າຍແລະຫຼາຍຝ່າຍໃນຂອບອົງການນິຕິບັນຍັດໃນຕໍ່ໜ້າ.

ຕອນທ້າຍຂອງກອງປະຊຸມ ໄດ້ມີການຮັບຮອງເອົາຖະແຫຼງການພະນົມເປັນ ເຊິ່ງເປັນຜົນສຳເລັດຂອງກອງປະຊຸມ ໂດຍມີເນື້ອໃນທີ່ສະແດງໃຫ້ເຫັນເຖິງຄວາມໝາຍໝັ້ນຮ່ວມກັນສິ່ງເສີມສັນຕິພາບ, ຄວາມຍຸຕິທຳ, ການເຄົາລົບເຊິ່ງກັນແລະກັນ, ການແກ້ໄຂຂໍ້ຂັດແຍ້ງໂດຍສັນຕິວິທີ, ການຮ່ວມມືແບບພະຫຸພາຄີ, ການພັດທະນາທີ່ຍືນຍົງ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ; ກອງປະຊຸມໄດ້ເຫັນດີເປັນເອກະພາບຮ່ວມກັນວ່າລັດຖະສະພາອິນໂດເນເຊຍ ຈະເປັນເຈົ້າພາບກອງປະຊຸມປະທານລັດຖະສະພາສາກົນ ຄັ້ງທີ 3 ໃນປີ 2027.

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ທິພາດີ ຄຸນ ສຸດາຣີ ປະທານສະພາແຫ່ງຊາດກຳປູເຈຍ ໃນໂອກາດເດີນທາງໄປເຂົ້າຮ່ວມກອງປະຊຸມປະທານລັດຖະສະພາສາກົນ ຄັ້ງທີ 2 ທີ່ນະຄອນຫຼວງພະນົມເປັນ, ລາຊະອານາຈັກກຳປູເຈຍ.

ໃນການຢ້ຽມຂໍ່ານັບ, ທ່ານປະທານສະພາແຫ່ງຊາດກຳປູເຈຍ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮັກສາການແທນປະທານສະພາແຫ່ງຊາດລາວ ທີ່ໄດ້ນຳພາຄະນະເຂົ້າຮ່ວມກອງປະຊຸມຄັ້ງນີ້ ອັນໄດ້ສະແດງໃຫ້ເຫັນເຖິງມິດຕະພາບທີ່ແໜ້ນແຟ້ນ ແລະ ການສະໜັບສະໜູນທີ່ດີຕໍ່ລັດຖະສະພາກຳປູເຈຍ ໃນການເປັນເຈົ້າພາບ, ທັງເປັນການປະກອບສ່ວນເຂົ້າໃນຜົນສຳເລັດຂອງກອງປະຊຸມທີ່ສຳຄັນດັ່ງກ່າວ. ນາງ ສູນທອນ ໄຊຍະຈັກ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບທີ່ອົບອຸ່ນ ແລະ ການກະກຽມທີ່ດີເລີດ ໃນການເປັນເຈົ້າພາບຂອງລັດຖະສະພາກຳປູເຈຍ ອັນໄດ້ສະແດງໃຫ້ເຫັນເຖິງຄວາມເຊື່ອໝັ້ນ ແລະ ບົດບາດສະພາສູງແລະສະພາແຫ່ງຊາດກຳປູເຈຍໃນເວທີພາກພື້ນ ແລະ ສາກົນ.

ທັງສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງລາວ-ກຳປູເຈຍ ກໍຄືລະຫວ່າງສອງອົງການນິຕິບັນຍັດທີ່ນັບມື້ໄດ້ຮັບການພັດທະນາຍິ່ງໆຂຶ້ນ; ພ້ອມທັງປຶກສາຫາລືກັນກ່ຽວກັບທິດທາງການຮ່ວມມືໃນຕໍ່ໜ້າ ໃນການສືບຕໍ່ແລກປ່ຽນການຢ້ຽມຢາມເຊິ່ງກັນແລະກັນຂອງການນຳຂັ້ນສູງ ແລະ ຂັ້ນຕ່າງໆ ເພື່ອແລກປ່ຽນບົດຮຽນການຈັດຕັ້ງປະຕິບັດບົດບາດການເຄື່ອນໄຫວຂອງອົງການນິຕິບັນຍັດຂອງສອງປະເທດ, ຊຸກຍູ້ໃຫ້ມີການໄປມາຫາສູ່ກັນຂອງປະຊາຊົນທັງສອງຊາດ, ການແລກປ່ຽນຄະນະຊາວໜຸ່ມຂອງ 3 ປະເທດອິນດູຈີນ, ສືບຕໍ່ກົນໄກການພົບປະລະຫວ່າງອົງການນິຕິບັນຍັດຂອງ 3 ປະເທດ ໃຫ້ມີຄວາມແໜ້ນແຟ້ນກັນຫຼາຍຂຶ້ນ.

## ປາຖະກະຖາ...

(ຕໍ່ຈາກໜ້າ 1)

ກ່າວ ທັງເປັນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນໄລຍະ 35 ປີຜ່ານມາ ແລະ ສືບຕໍ່ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຕໍ່ໜ້າ ໃຫ້ເຂັ້ມງວດ, ສັກສິດ, ມີປະສິດທິພາບ ແລະ ມີປະສິດທິຜົນ; ໃນຕອນເຊົ້າວັນທີ 28 ສິງຫານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີປາຖະກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 35 ປີ ໂດຍການປາຖະກະຖາຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີອະດີດຮອງປະທານສະພາແຫ່ງຊາດ ຊຸດທີ IX ເຊິ່ງມີທ່ານ ກອງແກ້ວ ໄຊສົງຄາມ ຮອງປະທານສະພາແຫ່ງຊາດ, ບັນດາການນຳຂັ້ນສູງ ພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ທວນຄືນມູນເຊື້ອຂະບວນການວິວັດ, ສິ່ງເອື້ອອຳນວຍຄວາມສະດວກ, ຂໍ້ຫຍຸ້ງຍາກທ້າທາຍຕ່າງໆ ແລະ ຄວາມໝາຍຄວາມສຳຄັນຂອງການສ້າງລັດຖະທຳມະນູນ ທີ່ເປັນສິ່ງຢືນຢັນຕໍ່ສາກົນວ່າສປປລາວເປັນປະເທດເອກະລາດ ມີອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ລວມທັງນ່ານນ້ຳນ່ານຟ້າ, ເປັນປະເທດເອກະພາບຂອງທຸກຊົນເຜົ່າທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້ ເຊິ່ງເປັນເຄື່ອງມືພື້ນຖານໃນການສ້າງຄວາມເຂັ້ມແຂງໝັ້ນຄົງໃຫ້ແກ່ສັງຄົມ, ສ້າງສະຖຽນລະພາບ ແລະ ຄວາມສະຫງົບໝັ້ນຄົງໃຫ້ແກ່ຊາດ ພ້ອມທັງສ້າງເສດຖະກິດ, ຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ໄດ້ຮັບການປັບປຸງດີຂຶ້ນຢ່າງຕໍ່ເນື່ອງ. ໃນປັດຈຸບັນ, ລັດໄດ້ມີການຫັນເນື້ອໃນຈິດໃຈຂອງລັດຖະທຳມະນູນ ເປັນກົດໝາຍໄດ້ 176 ສະບັບ ໃນນີ້, ກົດໝາຍຂົງເຂດປົກຄອງແລະຍຸຕິທຳ 33 ສະບັບ, ຂົງເຂດເສດຖະກິດ 79 ສະບັບ, ຂົງເຂດວັດທະນະທຳ-ສັງຄົມ 47 ສະບັບ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 12 ສະບັບ ແລະ ຂົງເຂດຕ່າງປະເທດ 5 ສະບັບ, ແລະ ນິຕິກຳໃຕ້ກົດໝາຍອີກຈຳນວນຫຼວງຫຼາຍ; ພ້ອມນັ້ນ, ຍັງຈະສືບຕໍ່ສ້າງ ແລະ ປັບປຸງຕໍ່ໄປເລື້ອຍໆ ເພື່ອເຮັດໃຫ້ເຄື່ອງມືໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ນັບມື້ເປັນລະບົບຄົບຊຸດເທື່ອລະກ້າວ ທັງເປັນພື້ນຖານຄ້ຳປະກັນໃຫ້ແກ່ການປະຕິບັດແລະເສີມຂະຫຍາຍສິດເປັນເຈົ້າຢ່າງເຕັມສ່ວນຂອງປະຊາຊົນ ໃນການເຂົ້າຮ່ວມສ້າງແລະປູແນວທາງຂອງພັກ ແລະ ກົດໝາຍຂອງລັດ ຕາມທິດທີ່ວ່າ: ໃຫ້ປະຊາຊົນຮູ້, ປະຊາຊົນປຶກສາ, ປະຊາຊົນເຂົ້າຮ່ວມຈັດຕັ້ງປະຕິບັດ, ປະຊາຊົນຕິດຕາມກວດກາ ແລະ ປະຊາຊົນໄດ້ຮັບຜົນປະໂຫຍດຊອບທຳ ພ້ອມທັງຍົກສູງນ້ຳໃຈຮັກຊາດ, ເປັນເຈົ້າຂອງປະເທດ, ສາມັກຄີເປັນປຶກແຜ່ນແໜ້ນໜາພາຍໃນຊາດ ແລະ ມີນ້ຳໃຈເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ພ້ອມກັນປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ, ສັກສິດ ແລະ ສືບຕໍ່ປະກອບສ່ວນຢ່າງສົມກຽດ ເຂົ້າໃນການປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ໄປຕາມຈຸດໝາຍທີ່ພັກແລະລັດເຮົາວາງໄວ້.

**(ນາງອາລິນ ສຸພົມມະປະດິດ)**



## ຫສຊ...

(ຕໍ່ຈາກໜ້າ 1)

ໄດ້ລົງຕິດຕາມ ແລະ ຊຸກຍູ້ວຽກງານການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສະພາປະຊາຊົນແຂວງ (ສພຂ) 7 ແຂວງ ພາກກາງ ແລະ ພາກໃຕ້ ຄື: ບໍລິຄໍາໄຊ, ຄໍາມ່ວນ, ສະຫວັນນະເຂດ, ສາລະວັນ, ອັດຕະປື, ເຊກອງ ແລະ ຈໍາປາສັກ ຕາມລໍາດັບ ເຊິ່ງມີຈຸດປະສົງຕົ້ນຕໍເພື່ອກວດກາ ແລະ ຊຸກຍູ້ການປັບປຸງກົງຈັກການຈັດຕັ້ງ, ການບັນຈຸ-ສັບຊ້ອນບຸກຄະລາກອນຂອງ ສພຂ, ຄະນະສະມາຊິກສະພາປະຊາຊົນແຂວງ (ຄສຂ) ປະຈໍາເຂດເລືອກຕັ້ງເມືອງ ແລະ ຫ້ອງການ ຄສຂ ປະຈໍາເມືອງ ໃຫ້ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍ ແລະ ນິຕິກໍາທີ່ກ່ຽວຂ້ອງ ຢ່າງມີຄຸນນະພາບ ແລະ ເພີ່ມປະສິດທິພາບໃນການປະຕິບັດວຽກງານ.

ໂອກາດນີ້, ທ່ານບຸນຈັນ ສີວົງພັນ ພ້ອມຄະນະ ໄດ້ເຂົ້າພົບປະເລຂາພັກແຂວງ ເພື່ອລາຍງານຈຸດປະສົງຂອງການເຄື່ອນໄຫວວຽກງານ; ຈາກນັ້ນ ໄດ້ຈັດກອງປະຊຸມເຮັດວຽກຮ່ວມກັບຄະນະປະທານ, ຄະນະຫ້ອງວ່າການ ແລະ ພະນັກງານທີ່ກ່ຽວຂ້ອງຂອງສະພາປະຊາຊົນແຂວງ ເພື່ອຮັບຟັງລາຍງານການປັບປຸງກົງຈັກການຈັດຕັ້ງ ແລະ ການກໍານົດຕໍາແໜ່ງງານ, ແລກປ່ຽນບົດຮຽນ ພ້ອມທັງຄົ້ນຄວ້າວິທີການແກ້ໄຂຂໍ້ຫຍຸ້ງຍາກ ເພື່ອເຮັດໃຫ້ການປະຕິບັດວຽກງານຂົງເຂດຫ້ອງວ່າການ ສພຂ ມີຄວາມກົມກຽວ, ໂລ່ງລ່ຽນ ແລະ ມີປະສິດທິຜົນສູງຂຶ້ນ.



ນອກຈາກນີ້, ຄະນະຍັງໄດ້ລົງພົບປະປະຊາຊົນເພື່ອມອບເຄື່ອງອຸປະໂພກ-ບໍລິໂພກ ແລະ ຢາປົວພະຍາດ ຊ່ວຍເຫຼືອປະຊາຊົນຜູ້ທຸກຍາກ ແລະ ຜູ້ປະສົບໄພພິບັດທາງທໍາມະຊາດຢູ່ເມືອງລະມາມ, ແຂວງເຊກອງ ລວມມູນຄ່າ 202 ລ້ານກີບ.

ພາຍຫຼັງສໍາເລັດການເຄື່ອນໄຫວວຽກງານ, ຈະໄດ້ສັງລວມບົດລາຍງານຢ່າງລະອຽດ ເພື່ອສະເໜີຕໍ່ຄະນະປະຈໍາສະພາແຫ່ງຊາດພິຈາລະນາ ແລະ ໃຫ້ທິດຊີ້ນໍາໃນຂັ້ນຕໍ່ໄປ.

**(ອານຸສອນ ພູມມີທອນ)**

## ສພຂ...

(ຕໍ່ຈາກໜ້າ 3)

ນໍາໄປຈັດຕັ້ງປະຕິບັດເຂົ້າໃນວຽກງານວິຊາສະເພາະຂອງຕົນໃຫ້ຖືກຕ້ອງ ຕາມລັດຖະທໍາມະນູນ ແລະ ກົດໝາຍຕ່າງໆ ໃຫ້ຖືກສອດຄ່ອງກັບສະພາບເງື່ອນໄຂໃນການດໍາລົງຊີວິດປະຈໍາວັນ ເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍລະບຽບກົດໝາຍວາງອອກຢ່າງເຂັ້ມງວດ.

ພ້ອມນັ້ນ, ຍັງໄດ້ຕິດຕາມກວດກາຊຸກຍູ້ໂຄງການສ້ອມແປງ ແລະ ເປີດກວ້າງໂຄ້ງ ທາງເລກ 6 (ທາງຫຼວງແຫ່ງຊາດ) ເຂດພູເລົ້າເມືອງຫົວເມືອງແລະຕິດຕາມຊຸຍູ້ການສ້ອມແປງ ແລະ ຂະຫຍາຍເສັ້ນທາງຢູ່ເທສະບານເມືອງຮ້ຽມແລະເສັ້ນທາງຢູ່ເມືອງຊ່ອນຕື່ມອີກ.

**(ສພຂ ຫົວພັນ)**

ອາດ ກະວີລາວ

# ທາງສອງເສັ້ນ

**# ມ.ດວງມາລາ**

❊ ກະວີອອນສິ່ງໃຫ້
ນັກຮຽນເຮົາຫວນຄິດ
ນໍາມາປົວແປງແກ້
ຂອງຕົນເອງເພື່ອໃຫ້

ໄວໜຸ່ມຍິງສາວ
ຮໍ່າຮອນວິໄຈແຈ້ງ
ບັນຫາເຄີຍບົກຜ່ອງ
ຊີວິດໄດ້ພັດທະນາ

❊ ຜ່ານມາມີນາດນ້ອງ
ລະເລີຍໃນການຮຽນ
ວິນແນມເຂັມໂມງຍ້າຍ
ບໍ່ເຄີຍຟັງຄິດຄົ້ນ    ວັນແຕ່ໂສເລື່ອງຫຼິ້ນ

ບາງຜ່ອງເມີນເສີຍ
ບໍ່ສຶກສາຄົ້ນ
ຍາມຄູບັນຍາຍບອກ
ລົມເຫລົ້າດື່ມເບຍ

❊ ບາງຄົນອວດເກັ່ງກ້າ
ວັນໆຊວນຊຸມແຊວ
ຜິດກັນປານສຸນັກບ້າ
ເຫດຜົນພຽງເລັກນ້ອຍ

ວາງທ່າອັນຕະພານ
ນັດຕີຣາວີຂ້າ
ຣາວີຕີບຕ່ອຍ
ຄືຕີຕ້ານຍາດແຟນ ໝ່າຍເດ!

❊ ຫຼາຍປະເດັນເດັ່ນຮ້ອນ
ໃນສັງຄົມປັດຈຸບັນ
ກົວຈະເສຍການຮຽນລ້າ
ສັງຄົມຊິກ່າວເວົ້າ

ເຫັນຢູ່ຫຼວງຫຼາຍ
ອາເນການັນນອງມື້ວ
ຫາກສັນຫາແນວບໍ່ແມ່ນ
ເສຍໜ້າພໍ່ແມ່ຕົນ

❊ ທາງທີ່ດີຄວນຄິດຄົ້ນ
ຖືສິນທໍາມາເປັນຫລັກ
ທາງຊົ່ວດີມີໃຫ້
ແລ້ວແຕ່ໃຈນາດນ້ອງ

ຕັ້ງຕໍ່ຮຽນໜັງສື
ຄວບຄຸມໃຈຕົນໄວ້
ເຮົາເດີນຕາມໄຕ່
ຊິທຽວເບື້ອງບ່ອນໃດ ນັ້ນແລ້ວ!



## ສັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທຽນ**

❊ **ລັດ**ສົ່ງເສີມໃຫ້ນໍາໃຊ້ຜະລິດຕະພັນລາວ ເພື່ອຫຼຸດຜ່ອນການນໍາເຂົ້າສິນຄ້າຈາກຕ່າງປະເທດ ສາເຫດຍ້ອນເງິນກີບອ່ອນຄ່າ ພາໃຫ້ອັບຕາແລກປ່ຽນເງິນຕາຕ່າງປະເທດ ເພີ່ມຂຶ້ນສູງ ຂໍໃຫ້ປ້າລຸງພີ່ນ້ອງຊົມໃຊ້ຂອງລາວ ປອງປະຊາເຮົາເຮັດ ອອກລາຍຊົມໃຊ້ ຢ່າໄປເມົາມົວຊື້ ຜະລິດຕະພັນຕ່າງຖິ່ນ ລາວເຮັດລາວຊ່ວຍໃຊ້ ລາວໄດ້ພໍ່າຈະເລີນ **ຊອບແລ້ວ!**

❊ **ເດືອນເກົ້າ** ບຸນຫໍ່ເຂົ້າປະດັບດິນ ໃນມື້ວັນສິບດັບ ເປັນປະເພນີສືບສານຕາມ**ຮີດ 12 ຄອງ 14** ປອງປະຊາຊາວພຸດ ແຫ່ຫໍ່ບຸນສ້າງ ຕັກບາດຍາມເຊົ້າ ກາງຄືນເອົາໝາກຫໍ່ ວາງໃສ່ດິນລຽບຮົ້ວ ຄອງເຄົ້າສືບມາ ຝາກສິ່ງຫາພີ່ນ້ອງ ພ້ອມພໍ່າສ່ຳພະເວສີ ທີ່ຈາກກັນ ຄົບລະພົບ ຮັບບຸນກຸສົນສ້າງ ຝາກແມ່ທໍລະນີເອີ້ນ ເປັນຕົວແທນຍໍຍື່ນ ປະເພນີບອກໄວ້ ໃຫ້ເຮົາໄດ້ສືບມາ **ນັ້ນແລ້ວ!**

## ຊອບຍິ້ມ

**# ພົ້ງລົ້ງ**

### ເລື່ອງ: ເມຍຟັງຄວາມ

ຜົວ-ເມຍຄູ່ໜຶ່ງຜິດກັນ, ຜູ້ເປັນເມຍຕົບຜົວ ປົ້ວະ... ບາດໜຶ່ງ

**ຜົວ:** ເກັ່ງແທ້ຕົບອີກບາດໜຶ່ງແມະ

ຜູ້ເປັນເມຍຈຶ່ງຕົບປົ້ວະ ເຂົ້າກົກຫູອີກບາດໜຶ່ງ

**ຜົວ:** ດີແຕ່ຍັງຟັງຄວາມບໍ່ລັບມຶງເຈັບໂຕແທ້!!!



## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

“ລື່ອາຈັບໃສແຈ້ງ    ດວງດຽວບໍ່ມີລື່ນ
ດາວຢູ່ລ້ອມ    ຫຼາຍລື້ນກໍ່ຈຶ່ງເຮືອງ”

ລັດຖະສະພາຕ່າງປະເທດ

# ສີລັງກາ ຈະປັບປຸງຮ່າງກົດໝາຍ ການເປີດເຜີຍຊັບສິນຕໍ່ສາທາລະນະ




(Xinhua) - ບີມາລ ຣັດນາຍາເກ (Bimal Rathnayake) ລັດຖະມົນຕີກະຊວງຄົມມະນາຄົມ, ທາງຫຼວງ ແລະ ການພັດທະນາຕົວເມືອງ ທັງເປັນຜູ້ນໍາລັດຖະສະພາຝ່າຍລັດຖະບານສີລັງກາກ່າວຕໍ່ລັດຖະສະພາເມື່ອວັນພະຫັດທີ 6 ສິງຫາ 2026 ວ່າ ລັດຖະບານຈະປັບປຸງຮ່າງກົດໝາຍຕ້ານການສໍ້ລາດບັງຫຼວງ ເພື່ອໃຫ້ປະຊາຊົນສາມາດເຂົ້າເຖິງຂໍ້ມູນການເປີດເຜີຍຊັບສິນ ແລະ ໜີ້ສິນຂອງຜູ້ແທນທີ່ໄດ້ຮັບເລືອກຕັ້ງ; ຣັດນາຍາເກ ກ່າວວ່າ ຮ່າງກົດໝາຍດັ່ງກ່າວ ເຊິ່ງໄດ້ປະກາດໃນຈົດໝາຍເຫດທາງລັດຖະການຂອງລັດຖະບານ ເມື່ອວັນທີ 24 ກໍລະກົດ 2026 ຈະໄດ້ຮັບການປັບປຸງເພື່ອເພີ່ມຄວາມໂປ່ງໃສກ່ຽວກັບການເປີດເຜີຍຂໍ້ມູນທີ່ຜູ້ແທນປະຊາຊົນຍື່ນ.

ພາຍໃຕ້ມາດຕາ 86 ແລະ 88 ຂອງກົດໝາຍຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 9 ປີ 2023, ເຈົ້າໜ້າທີ່ລະດັບສູງ ແລະ ຜູ້ນໍາທາງການເມືອງເກືອບ 300 ຄົນ ລວມທັງປະທານາທິບໍດີຕ້ອງເປີດເຜີຍຊັບສິນ ແລະ ໜີ້ສິນຂອງຕົນ.

ໃນເບື້ອງຕົ້ນ, ການເປີດເຜີຍຂໍ້ມູນນັ້ນ ໄດ້ຖືກສົ່ງໃນຮູບແບບເອກະສານ ກ່ອນທີ່ຈະປ່ຽນໄປໃຊ້ລະບົບອອນລາຍ.

# ສານຝຣັ່ງ ລະງັບຮ່າງກົດໝາຍຫ້າມ ເດັກອາຍຸຕໍ່າກວ່າ 15 ປີ ຫຼິ້ນສື່ສັງຄົມ



(Reuters) - ສານລັດຖະທໍາມະນູນຝຣັ່ງ ຊີ້ວ່າຮ່າງກົດໝາຍຫ້າມເດັກອາຍຸຕໍ່າກວ່າ 15 ປີ ໃຊ້ສື່ສັງຄົມອອນລາຍ ກະທົບເສລີພາບໃນການສະແດງຄວາມຄິດເຫັນແລະສິດໃນຄວາມເປັນສ່ວນຕົວ, ດ້ານລັດຖະບານ ເລັ່ງແກ້ໄຂເນື້ອໃນເພື່ອໃຫ້ກົດໝາຍມີຜົນບັງຄັບໃຊ້ຕາມແຜນ.

ວັນສຸກທີ 14 ສິງຫາ 2026, ສານລັດຖະທໍາມະນູນ ມີຄໍາຕັດສິນລະງັບຮ່າງກົດໝາຍຫ້າມເດັກອາຍຸຕໍ່າກວ່າ 15 ປີ ໃຊ້ສື່ສັງຄົມອອນລາຍ ເນື່ອງຈາກເຫັນວ່າເປັນການລະເມີດເສລີພາບໃນການສະແດງຄວາມຄິດເຫັນ ແລະ ການສື່ສານ; ຮ່າງກົດໝາຍດັ່ງກ່າວ ກໍານົດຫ້າມເດັກອາຍຸຕໍ່າກວ່າ 15 ປີ ເປີດບັນຊີໃຊ້ສື່ສັງຄົມອອນລາຍ ເລີ່ມແຕ່ວັນທີ 1 ກັນຍານີ້ ແລະ ໃຫ້ເວທີຕ່າງໆ ປິດບັນຊີທີ່ມີຢູ່ແລ້ວພາຍໃນ 4 ເດືອນ ພ້ອມທັງໃຊ້ລະບົບກວດສອບອາຍຸທີ່ໄດ້ຮັບການອະນຸມັດຈາກໜ່ວຍງານປົກປ້ອງຂໍ້ມູນສ່ວນບຸກຄົນຂອງຝຣັ່ງ.

ຢ່າງໃດກໍຕາມ, ຄະນະຜູ້ພິພາກສາສານລັດຖະທໍາມະນູນເຫັນວ່າຮ່າງກົດໝາຍບໍ່ໄດ້ກໍານົດເງື່ອນໄຂ ແລະ ຂອບເຂດການເປີດເຜີຍຫຼັກຖານຢັ້ງຢືນອາຍຸຢ່າງຊັດເຈນພຽງພໍ ເຊິ່ງອາດກະທົບທັງເສລີພາບໃນການສະແດງຄວາມຄິດເຫັນ ແລະ ສິດໃນຄວາມເປັນສ່ວນຕົວ.

ປະທານາທິບໍດີເອັມມານູເອລ ມາຄຣົງ ຍອມຮັບຄໍາຕັດສິນຂອງສານລັດຖະທໍາມະນູນ ແລະ ໄດ້ສັ່ງໃຫ້ນາຍົກ ລັດຖະມົນຕີ ເຊບາສຕຽນ ເລີຄໍນູ (Sébastien Lecornu) ແກ້ໄຂເນື້ອໃນຂອງຮ່າງກົດໝາຍຢ່າງຮີບດ່ວນໃນປະເດັນທີ່ຖືກສານວິຈານ ພ້ອມທັງຢືນຢັນວ່າ ຕ້ອງການໃຫ້ກົດໝາຍສະບັບນີ້ມີຜົນບັງຄັບໃຊ້ກ່ອນລະດູໃບໄມ້ປົ່ງປີ 2027 ເຊິ່ງ ຝຣັ່ງຈະຈັດການເລືອກຕັ້ງປະທານາທິບໍດີຄັ້ງໃໝ່, ແຕ່ ມາຄຣົງ ບໍ່ສາມາດລົງແຂ່ງຂັນເປັນສະໄໝທີ 3 ໄດ້.

ລັດຖະສະພາຮັບຮອງຮ່າງກົດໝາຍດັ່ງກ່າວເມື່ອເດືອນກໍລະກົດທີ່ຜ່ານມາ, ເຮັດໃຫ້ຝຣັ່ງເປັນປະເທດທໍາອິດໃນເອີຣົບ ທີ່ປະຕິບັດຕາມອົດສະຕຣາລີ ເຊິ່ງອອກກົດໝາຍຫ້າມເດັກອາຍຸຕໍ່າກວ່າ 16 ປີ ເຂົ້າເຖິງເວທີສື່ສັງຄົມອອນລາຍ ເມື່ອເດືອນທັນວາປີຜ່ານມາ; ຂະນະທີ່ຫຼາຍປະເທດທົ່ວໂລກ ລວມທັງ ສປຈີນ, ສະຫະລັດອາຣັບເອມິເຣດ (UAE) ແລະ ຕວັກກີ ຕ່າງອອກມາດຕະການຈໍາກັດຫຼືກຽມຈໍາກັດການເຂົ້າເຖິງສື່ສັງຄົມອອນລາຍຂອງເຍົາວະຊົນ.

ບໍລິສັດສື່ສັງຄົມອອນລາຍສ່ວນໃຫຍ່ ຄັດຄ້ານການອອກກົດໝາຍຫ້າມແບບກວມທັງໝົດ ໂດຍຢືນຢັນວ່າພວກເຂົາມີມາດຕະການເພື່ອປົກປ້ອງຜູ້ໃຊ້ອາຍຸນ້ອຍຢູ່ແລ້ວ, ແຕ່ຫາກປະເທດໃດອອກກົດໝາຍບັງຄັບ ກໍຈະປະຕິບັດຕາມ.

# Putin ລົງນາມກົດໝາຍສະບັບທໍາອິດ ທີ່ຄວບຄຸມສະກຸນເງິນດິຈິຕອນໃນລັດເຊຍ




(Xinhua) - ປະທານາທິບໍດີ ວລາດິມີຣ໌ ປູຕິນ ລົງນາມໃນກົດໝາຍສະບັບທໍາອິດຂອງລັດເຊຍ ເມື່ອວັນອັງຄານທີ 4 ສິງຫາ 2026 ໂດຍໃຫ້ການຄວບຄຸມຢ່າງຄົບຖ້ວນກ່ຽວກັບການໄຫຼວຽນຂອງສະກຸນເງິນດິຈິຕອນ ແລະ ສິດ ທິດິຈິຕອນໃນປະເທດ; ເອກະສານດັ່ງກ່າວ ໄດ້ກໍານົດກົດລະບຽບສໍາລັບຕະຫຼາດແລກປ່ຽນເງິນດິຈິຕອນ, ຜູ້ຮັບຝາກດິຈິຕອນ ແລະ ຜູ້ເຂົ້າຮ່ວມຕະຫຼາດ, ລວມທັງກໍານົດເງື່ອນໄຂສໍາລັບນັກລົງທຶນໃນການຊື້ເງິນດິຈິຕອນ.

ກົດໝາຍສະບັບນີ້ ຄວບຄຸມການຈັດລະບຽບ, ການບັນຊີ, ແລະ ການຄຸ້ມຄອງສະກຸນເງິນດິຈິຕອນ ແລະ ເຄື່ອງມືດິຈິຕອນຕ່າງປະເທດ. ນອກຈາກນີ້, ຍັງຄວບຄຸມການຂຸດເງິນດິຈິຕອນ, ການອອກ ແລະ ການໄຫຼວຽນຂອງສິດ ທິດິຈິຕອນ, ແລະ ກິດຈະກໍາຂອງຜູ້ປະກອບການລະບົບຂໍ້ມູນທີ່ອອກຊັບສິນທາງການເງິນດິຈິຕອນ; ຍິ່ງໄປກວ່ານັ້ນ, ກົດໝາຍຍັງກໍານົດມາດຕະຖານສໍາລັບຜູ້ໃຫ້ບໍລິການແລກປ່ຽນເງິນດິຈິຕອນ, ຜູ້ຮັບຝາກດິຈິຕອນ, ນາຍໜ້າ, ບໍລິສັດຈັດການ, ຜູ້ຈັດງານຊື້ຂາຍ, ແລະ ສູນຊໍາລະເງິນ ຫຼື ສູນບໍລິການທາງການເງິນ (clearing house).

ຕາມກົດໝາຍ, ມີພຽງອົງກອນທີ່ຂຶ້ນທະບຽນພິເສດກັບລັດຖະບານເທົ່ານັ້ນ ທີ່ຈະໄດ້ຮັບອະນຸຍາດໃຫ້ດໍາເນີນກິດຈະກໍາແລກປ່ຽນສະກຸນເງິນດິຈິຕອນ ຫຼັງຈາກວັນທີ 1 ກໍລະກົດ 2027 ໂດຍອົງກອນດັ່ງກ່າວຕ້ອງມີທຶນຂັ້ນຕໍ່າ 15 ລ້ານຣູເບິນ (ປະມານ 186,000 ໂດລາ) ແລະ ຕ້ອງເຂົ້າຮ່ວມອົງການຄວບຄຸມຕົນເອງໃນຕະຫຼາດການເງິນອີກດ້ວຍ.

ນັກລົງທຶນທີ່ບໍ່ໄດ້ຮັບການຮັບຮອງ ຈະສາມາດຊື້ສະກຸນເງິນດິຈິຕອນທີ່ມີສະພາບຄ່ອງຫຼາຍທີ່ສຸດຜ່ານຄົນກາງ ໂດຍມີວົງເງິນສູງສຸດ 300,000 ຣູເບິນຕໍ່ຄົນກາງຕໍ່ປີ, ສ່ວນນັກລົງທຶນທີ່ໄດ້ຮັບການຮັບຮອງສາມາດຊື້ສະກຸນເງິນດິຈິຕອນໃດກໍໄດ້ໂດຍບໍ່ມີຂໍ້ຈໍາກັດດັ່ງກ່າວ; ຕາມກົດລະບຽບໃໝ່, ທະນາຄານມີອໍານາດໃນການປິດກັ້ນ (ບລັອກ) ການເຮັດທຸລະກໍາທີ່ໜ້າສົງໄສກ່ຽວກັບສະກຸນເງິນດິຈິຕອນ.

ກິດຈະກໍາແລກປ່ຽນສະກຸນເງິນດິຈິຕອນ ໝາຍເຖິງການດໍາເນີນການຊື້ ແລະ ຂາຍເງິນສະກຸນດິຈິຕອນຢ່າງເປັນລະບົບໃນນາມຂອງຕົນເອງແລະເພື່ອບັນຊີຂອງຕົນເອງ ນອກເໜືອຈາກການຊື້ຂາຍແບບມີລະບົບ, ໂດຍເກນສໍາລັບການດໍາເນີນການຢ່າງເປັນລະບົບແມ່ນການເຮັດທຸລະກໍາສອງຄັ້ງຂຶ້ນໄປພາຍໃນເດືອນດຽວ ທີ່ມີມູນຄ່າລວມເກີນ3.5ລ້ານຣູເບິນ.

ກົດລະບຽບໃໝ່ລະບຸວ່າການໂຄສະນາບໍລິການລົງທຶນໃນສະກຸນເງິນດິຈິຕອນຕ້ອງເຕືອນເຖິງຄວາມສ່ຽງສູງ ແລະ ຜົນຂາດທຶນທາງການເງິນທີ່ອາດເກີດຂຶ້ນຈາກການເຮັດທຸລະກໍາດັ່ງກ່າວ; ນອກຈາກນີ້, ຍັງຕ້ອງໃຫ້ໂອກາດຜູ້ໃຊ້ໄດ້ກວດສອບຄວາມສ່ຽງທີ່ອາດເກີດຂຶ້ນ ແລະ ແຈ້ງໃຫ້ຊາບເຖິງຂໍ້ຈໍາກັດທາງກົດໝາຍທີ່ກ່ຽວຂ້ອງກັບການດໍາເນີນການດັ່ງກ່າວອີກດ້ວຍ.

ກົດໝາຍຍັງຄົງຫ້າມການໃຊ້ສະກຸນເງິນດິຈິຕອນ ແລະ ສິດທິດິຈິຕອນ ເປັນຮູບແບບການຊໍາລະເງິນພາຍໃນດິນແດນລັດເຊຍ ແລະ ຫ້າມການໂຄສະນາທີ່ກ່ຽວຂ້ອງ.

ພາກສ່ວນຕົ້ນຕໍຂອງກົດໝາຍ ຈະມີຜົນບັງຄັບໃຊ້ໃນວັນທີ 1 ກັນຍາແລະບົດບັນຍັດບາງສ່ວນ ຈະມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ກໍລະກົດ 2027.

# ລັດຖະສະພາ Sweden ຫຼຸດອາຍຸຜູ້ຮັບໂທດທາງອາຍາເປັນ 14 ປີ ກ່ອນການເລືອກຕັ້ງ



(AFP) - ວັນທີ 13 ສິງຫາ 2026, ລັດຖະສະພາສະວີເດັນ ຫຼື ຊູແອດ ລົງມະຕິຫຼຸດອາຍຸຄວາມຮັບຜິດຊອບທາງອາຍາ ຈາກ 15 ປີ ເຫຼືອ 14 ປີ, ຂະນະທີ່ລັດຖະບານຝ່າຍຂວາ ກໍາລັງມຸ່ງໜ້າສູ່ການເລືອກຕັ້ງລະດັບຊາດ, ໂດຍສັນຍາວ່າຈະປາບປາມອາຊະຍາກໍາຢ່າງເດັດຂາດ.

ລັດຖະບານຊູແອັດຕ້ອງການຫຼຸດອາຍຸຄວາມຮັບຜິດຊອບທາງອາຍາ ເຫຼືອພຽງ 13 ປີ, ແຕ່ຖອນຂໍ້ສະເໜີດັ່ງ ກ່າວເມື່ອເດືອນມິຖຸນາຜ່ານມາ ເນື່ອງຈາກບໍ່ໄດ້ຮັບການສະໜັບສະໜູນຢ່າງພຽງພໍໃນລັດຖະສະພາ.

ໃນການລົງມະຕິຄັ້ງຫຼ້າສຸດ, ສະມາຊິກລັດຖະສະພາ 281 ຄົນ ລົງຄະແນນສຽງເຫັນດີໃຫ້ຫຼຸດອາຍຸຄວາມຮັບຜິດຊອບທາງອາຍາ ເຫຼືອ 14 ປີ, ສ່ວນອີກ 66 ຄົນ ລົງຄະແນນສຽງຄັດຄ້ານ(ລັດຖະສະພາຊູແອດ ມີທັງໝົດ 349 ທີ່ນັ່ງ). ນອກຈາກນີ້, ລັດຖະສະພາຍັງລົງມະຕິປ່ຽນການຫຼຸດໂທດຈໍາຄຸກສໍາລັບເຍົາວະຊົນດ້ວຍ; ໂດຍປັດຈຸບັນ, ເຍົາວະຊົນທີ່ມີອາຍຸຕໍ່າກວ່າ 18 ປີ ສາມາດຖືກຈໍາຄຸກໄດ້ສູງສຸດເຖິງ18ປີ.

ປະເທດໃນສະແກນດິນາວຽນແຫ່ງນີ້ ໄດ້ປະເຊີນກັບບັນຫາການຕໍ່ສູ້ລະຫວ່າງກຸ່ມແກ໊ງອາຊະຍາກອນມາເປັນເວລາຫຼາຍກວ່າທົດສະວັດແລ້ວ, ໂດຍສະເພາະແມ່ນການຍາດຊິງອໍານາດເພື່ອຄວບຄຸມຕະຫຼາດຢາເສບຕິດເຊິ່ງລັດຖະບານອະນຸລັກນິຍົມສຽງສ່ວນໜ້ອຍຂອງນາຍົກລັດຖະມົນຕີ ອູລ໌ຟ ຄຣິສເຕີສສັນ (Ulf Kristersson) ກໍານົດໃຫ້ການຕໍ່ສູ້ກັບອາຊະຍາກໍາເປັນຫົວໃຈສໍາຄັນຂອງນະໂຍບາຍ ຫຼັງຈາກເຂົ້າຮັບຕໍາແໜ່ງໃນປີ 2022.

ກົດໝາຍອາຍຸຄວາມຮັບຜິດຊອບທາງອາຍາສະບັບໃໝ່ ຈະມີຜົນບັງຄັບໃຊ້ໃນວັນທີ 10 ກັນຍານີ້, ພຽງ3ວັນກ່ອນການເລືອກຕັ້ງທົ່ວໄປຂອງປະເທດ.

# New Zealand ຜ່ານກົດໝາຍເພີ່ມອໍານາດການຈັດກຸມຂອງພົນລະເມືອງ

(Xinhua) - ເຈົ້າໜ້າທີ່ລະດັບສູງກ່າວເມື່ອວັນອັງຄານທີ 4 ສິງຫາ 2026 ວ່າ ທຸລະກິດໃນນູແວນເຊລັງ ຈະມີອໍານາດເພີ່ມຕື່ມໃນການກັກຕົວຜູ້ຕ້ອງສົງໄສວ່າກະທໍາຜິດ ພາຍໃຕ້ການປັບປຸງກົດໝາຍອາຍາຂອງປະເທດ.



ພອນ ໂກລດ໌ສະມິດ (Paul Goldsmith) ລັດຖະມົນຕີກະຊວງຍຸຕິທໍາ ກ່າວໃນຖະແຫຼງການວ່າ ລັດຖະບານມີຄວາມມຸ່ງໝັ້ນທີ່ຈະຮັບປະກັນວ່າຜູ້ຂາຍຍ່ອຍໄດ້ຮັບການປົກປ້ອງຢ່າງມີປະສິດທິພາບ, ມີອໍານາດໃນການຢຸດຢັ້ງການກະທໍາຜິດ, ແລະ ຜູ້ກະທໍາຜິດຈະຖືກຈັບກຸມແລະຂັດຂວາງບໍ່ໃຫ້ກະທໍາຜິດຊໍ້າອີກ; ເຂົາກ່າວວ່າ ອາຊະຍາກໍາໃນຮ້ານຂາຍຍ່ອຍເຮັດໃຫ້ທຸລະກິດນູແວນເຊລັງ ສູນເສຍເງິນຫຼາຍຕື້ໂດລາ, ຜູ້ຂາຍຍ່ອຍ ແລະ ພະນັກງານຮັກສາຄວາມປອດໄພ "ປະເຊີນກັບການລ່ວງລະເມີດ ແລະ ການທໍາຮ້າຍຮ່າງກາຍທີ່ຊາວນູແວນເຊລັງບໍ່ຄວນຕ້ອງປະເຊີນ".

ລັດຖະມົນຕີກ່າວວ່າ ການປັບປຸງນີ້ ຈະເຮັດໃຫ້ຜູ້ກະທໍາຜິດຕ້ອງປະເຊີນການລົງໂທດທີ່ຮຸນແຮງຂຶ້ນສໍາລັບອາຊະຍາກໍາໃນຮ້ານຂາຍຍ່ອຍ, ການທໍາຮ້າຍພະນັກງານກູ້ໄພສຸກເສີນ, ການຕ່ອຍຕີ ແລະ ການຄ້າທາດ.

ການປ່ຽນແປງອໍານາດການຈັບກຸມໂດຍພົນລະເມືອງ ກໍານົດໃຫ້ບຸກຄົນທີ່ທໍາການຈັບກຸມ ຕ້ອງຕິດຕໍ່ຕໍາຫຼວດ ແລະ ປະຕິບັດຕາມຄໍາແນະນໍາຂອງຕໍາຫຼວດ; ນອກຈາກນີ້, ພວກເຂົາຍັງຊີ້ແຈງເພີ່ມຕື່ມວ່າ ສາມາດໃຊ້ການຄວບຄຸມທີ່ສົມເຫດສົມຜົນ ແລະ ກໍາລັງທີ່ສົມເຫດສົມຜົນ ເມື່ອທໍາການຈັບກຸມຫຼືປົກປ້ອງຊັບສິນ.

ວັນທີ 6 ສິງຫາ, ລັດຖະສະພາໄດ້ຜ່ານຮ່າງກົດໝາຍດັ່ງກ່າວ.

ພາຍໃຕ້ກົດໝາຍໃໝ່, ພົນລະເມືອງຈະສາມາດແຊກແຊງເພື່ອຢຸດຢັ້ງການກະທໍາຜິດໃດໆ ພາຍໃຕ້ກົດໝາຍອາຍາໄດ້ທຸກເວລາ; ກ່ອນໜ້ານີ້, ອໍານາດບາງຢ່າງ ລວມທັງອໍານາດທີ່ກ່ຽວຂ້ອງກັບການລັກຂະໂມຍສິນຄ້າທີ່ມີມູນຄ່າຕໍ່າກວ່າ 1,000 ໂດລານູແວນເຊລັງ (ປະມານ 587 ໂດລາສະຫະລັດ) ໃຊ້ໄດ້ລະຫວ່າງ 21:00 ໂມງ ຫາ 06:00 ໂມງເຊົ້າ ເທົ່ານັ້ນ.

ຮ່າງກົດໝາຍນີ້ ຍັງສ້າງຄວາມຜິດໃໝ່ສໍາລັບການທໍາຮ້າຍຮ່າງກາຍເຈົ້າໜ້າທີ່ຜູ້ປະຕິບັດງານດ່ານທໍາອິດ ຫຼື ເຈົ້າໜ້າທີ່ແກ້ໄຂແນວໜ້າ, ນໍາສະເໜີຄວາມຜິດໃໝ່ 3 ຢ່າງທີ່ກ່ຽວຂ້ອງກັບ "ການຕ່ອຍຕີ", ກໍານົດລະບົບການລົງໂທດໃໝ່ສໍາລັບການລັກຂະໂມຍໃນຮ້ານຄ້າ, ແລະ ເສີມສ້າງກົດໝາຍຕ້ານການຄ້າມະນຸດ ແລະ ການລັກລອບຂົນຄົນເຂົ້າເມືອງ.

# ອົດສະຕຣາລີ ຈະກໍານົດໃຫ້ບໍລິສັດເຕັກໂນໂລຊີຈ່າຍເງິນຄ່າສື່ຫຼາຍຂຶ້ນ ພາຍໃຕ້ກົດໝາຍສື່ປັບປຸງໃໝ່




(Reuters)-ອົດສະຕຣາລີ ຈະເພີ່ມຈໍານວນຂໍ້ຕົກລົງທີ່ບໍລິສັດເຕັກໂນໂລຊີຂະໜາດໃຫຍ່ ຕ້ອງບັນລຸກັບສໍານັກຂ່າວທ້ອງຖິ່ນ ພາຍໃຕ້ກົດໝາຍການອອກໃບອະນຸຍາດສື່ມວນຊົນສະບັບປັບປຸງ ທີ່ສະເໜີຕໍ່ລັດຖະສະພາເມື່ອວັນພະຫັດທີ 13 ສິງຫາ 2026, ໂດຍມາດຕະການດັ່ງກ່າວ ຈະກະຈາຍລາຍຮັບຈາກການໂຄສະນາໄປຍັງສື່ມວນຊົນ ພາຍໃນປະເທດຫຼາຍຂຶ້ນ; ການປ່ຽນແປງຄັ້ງນີ້ ກໍານົດໃຫ້ລັດຖະບານຕ້ອງມອບເງິນທຶນ 5% ທີ່ລະດົມໄດ້ພາຍໃຕ້ແຜນງານ ໃຫ້ແກ່ສໍານັກຂ່າວ ເອພີ ອົດສະຕຣາລີ (Australian Associated Press - AAP) ເຊິ່ງເດີມເປັນບໍລິການຂ່າວສານທີ່ດໍາເນີນການໂດຍອຸດສາຫະກໍາສື່ມວນຊົນ, ແຕ່ປັດຈຸບັນດໍາເນີນງານໃນຖານະອົງການບໍ່ຫວັງຜົນກໍາໄລ.

ການປ່ຽນແປງທີ່ເກີດຂຶ້ນຫຼັງຈາກການຫາລືລະຫວ່າງລັດຖະບານກັບຝ່າຍຄ້ານ ຈະກໍານົດໃຫ້ເວທີດິຈິຕອນຕ່າງໆ ຕ້ອງບັນລຸຂໍ້ຕົກລົງກັບບໍລິສັດສື່ຢ່າງໜ້ອຍ 8 ແຫ່ງ, ເພີ່ມຂຶ້ນຈາກ 6 ແຫ່ງ ໃນຮ່າງກົດໝາຍສະບັບກ່ອນໜ້າ; ນອກຈາກນີ້, ລັດຖະບານຍັງນໍາຂໍ້ຈໍາກັດກັບມາໃຊ້ອີກຄັ້ງເຊິ່ງຈໍາກັດຂໍ້ຕົກລົງແຕ່ລະສະບັບໄວ້ທີ່ 25% ຂອງພັນທະໃນການຈ່າຍພາສີຂອງເວທີພາຍໃຕ້ກົດໝາຍ ເຊິ່ງເທົ່າກັບ 2.5% ຂອງລາຍຮັບຈາກການໂຄສະນາໃນອົດສະຕຣາລີຂອງບໍລິສັດ ໂດຍຈໍານວນເງິນທີ່ຈ່າຍຈະຖືກຫັກລົບດ້ວຍມູນຄ່າຂອງຂໍ້ຕົກລົງທີ່ບັນລຸ.

ກົດໝາຍສະບັບນີ້ ຟື້ນຟູຄວາມພະຍາຍາມຂອງລັດຖະບານ ໃນການສົ່ງເງິນຈາກບໍລິສັດເຕັກໂນໂລຊີຂະໜາດໃຫຍ່ ໄປຍັງອົງການຂ່າວຂອງອົດສະຕຣາລີ ເຊິ່ງເນື້ອຫາຂອງພວກເຂົາຊ່ວຍຊຸກຍູ້ການມີສ່ວນຮ່ວມຂອງຜູ້ໃຊ້ ແລະ ລາຍຮັບຈາກການໂຄສະນາເທິງເວທີຂອງຕົນເອງ.

"ປະຊາຊົນເຂົ້າເຖິງຂ່າວສານດ້ວຍວິທີການ ແລະແຫຼ່ງທີ່ມາທີ່ແຕກຕ່າງກັນ ນັ້ນເປັນເຫດຜົນທີ່ພວກເຮົາກໍາລັງປ່ຽນແປງຮູບແບບການກະຈາຍລາຍຮັບ ເພື່ອສະໜັບສະໜູນອົງການສື່ມວນຊົນຂະໜາດນ້ອຍທີ່ຫຼາກຫຼາຍໄດ້ດີຍິ່ງຂຶ້ນ" ນາງ ອານິກາ ເວວສ໌ (Anika Wells) ລັດຖະມົນຕີກະຊວງການສື່ສານອົດສະຕຣາລີ ກ່າວໃນຖະແຫຼງການ.

ຂະນະທີ່ລັດຖະບານລະບຸຕື່ມວ່າ ການໃຫ້ເງິນທຶນສະໜັບສະໜູນແກ່ AAP ເຊິ່ງເປັນຜູ້ສະໜອງຂໍ້ຄວາມ, ຮູບພາບ ແລະ ຄລິບວິດີໂອ ໃຫ້ແກ່ອົງການສື່ມວນຊົນທົ່ວປະເທດແລະປະເຊີນກັບການປິດຕົວໃນປີ 2020 ຖືເປັນການຍອມຮັບບົດບາດໃນການສະໜັບສະໜູນວຽກງານສື່ສານມວນຊົນເພື່ອຜົນປະໂຫຍດສາທາລະນະ.

# ຜູ້ນຳ ສ.ເກົາຫຼີສະໜັບສະໜູນປັບປຸງລັດຖະທຳມະນູນຫຼຸດວາລະປະທານາທິບໍດີເຫຼືອ 4 ປີ ແລະ ໃຫ້ດຳລົງຕຳແໜ່ງເກີນ 1 ສະໄໝ



(REUTERS) - ຜູ້ນຳ ສ.ເກົາຫຼີ ສະໜັບສະໜູນການປັບປຸງລັດຖະທຳມະນູນ ໃຫ້ຫຼຸດວາລະປະທານາທິບໍ ດີ ຈາກ 5 ປີ ເຫຼືອ 4 ປີ, ເປີດທາງໃຫ້ລົງສະໝັກຮັບເລືອກຕັ້ງອີກສະໄໝແລະ ໂອນອຳນາດບາງຢ່າງໃຫ້ສະພາແຫ່ງຊາດ ເພື່ອປັບສົມດຸນອຳນາດທາງການເມືອງຂອງປະເທດ.

ວັນທີ 14 ສິງຫາ 2026, ປະທານາທິບໍດີ ອີ ແຈ ມຽງ (Lee Jae Myung) ໄດ້ສະແດງຈຸດຢືນສະໜັບສະໜູນການປັບປຸງລັດຖະທຳມະນູນ ເພື່ອຫຼຸດວາລະການດຳລົງຕຳແໜ່ງປະທານາທິບໍດີ ເປັນ 4 ປີ, ແຕ່ອະນຸຍາດໃຫ້ສາມາດດຳລົງຕຳແໜ່ງໄດ້ຫຼາຍກວ່າ 1 ສະໄໝ; ຜູ້ນຳ ສ.ເກົາຫຼີ ກ່າວວ່າ ຈຸດຢືນຂອງຕົນກ່ຽວກັບການປະຕິຮູບລັດຖະທຳມະນູນ ຍັງຄົງບໍ່ປ່ຽນແປງຈາກການໂຄສະນາຫາສຽງເລືອກຕັ້ງປະທານາທິບໍດີເມື່ອປີ 2022 ເຊິ່ງສະໜັບສະໜູນການປັບສົມດຸນອຳນາດລະຫວ່າງຝ່າຍບໍລິຫານ ກັບ ຝ່າຍນິຕິບັນຍັດ ຫຼື ສະພາແຫ່ງຊາດ, ລວມທັງເພີ່ມອຳນາດການປົກ ຄອງຕົນເອງໃຫ້ທ້ອງຖິ່ນ ແລະ ເສີມສ້າງການປົກປ້ອງສິດຕາມລັດຖະທຳມະນູນສຳລັບພົນລະເມືອງ.

ອີ ກ່າວວ່າ ລັດຖະທຳມະນູນສະບັບປັດຈຸບັນບໍ່ໄດ້ຮັບການປັບປຸງເປັນເວລາເກືອບ 40 ປີ ແລະ ບໍ່ສອດຄ່ອງກັບສະຖານະການໃນປັດຈຸບັນ ຈຶ່ງຄວນມີການປັບປຸງ, ໂດຍລາຍລະອຽດຂອງການປັບປຸງລັດຖະທຳມະນູນໃດໆ ຄວນໄດ້ຮັບການຕົກລົງໂດຍສະພາແຫ່ງຊາດ ຜ່ານການເຫັນດີຈາກທັງສອງຝ່າຍ.

ຂໍ້ສະເໜີຂອງເຂົາຍັງລວມມີການໂອນອຳນາດປະທານາທິບໍດີບາງຢ່າງໃຫ້ສະພາແຫ່ງຊາດ ເຊັ່ນ: ອຳນາດທີ່ກ່ຽວຂ້ອງກັບຄະນະກຳມະການກວດສອບແລະກວດກາ, ການສະເໜີຊື່ຜູ້ດຳລົງຕຳແໜ່ງນາຍົກລັດຖະມົນຕີ, ແລະ ການແຕ່ງຕັ້ງເຈົ້າໜ້າທີ່ລະດັບສູງບາງຕຳແໜ່ງ.

ອີ ກ່າວຕື່ມວ່າ ໃນລະຫວ່າງການໂຄສະນາຫາສຽງເລືອກຕັ້ງປະທານາທິບໍດີເມື່ອປີ 2022, ເຂົາໄດ້ສະແດງຈຸດຢືນວ່າສາມາດຍອມຮັບການຫຼຸດວາລະດຳລົງຕຳແໜ່ງປະທານາທິບໍດີຫາກຈຳເປັນເພື່ອໃຫ້ບັນລຸການປະຕິຮູບລັດຖະທຳມະນູນ ແລະ ຈຸດຢືນດັ່ງກ່າວຍັງບໍ່ປ່ຽນແປງ.

ການສະແດງຈຸດຢືນຄັ້ງຫຼ້າສຸດຂອງຜູ້ນຳສ.ເກົາຫຼີ ໃນເລື່ອງນີ້ ສອດຄ່ອງກັບສຳນັກຂ່າວ Yonhap ເຄີຍລາຍງານໂດຍອ້າງອີງແຫຼ່ງຂ່າວຈາກເຈົ້າໜ້າທີ່ໃນສຳນັກງານປະທານາທິບໍດີວ່າ ອີ ສະໜັບສະໜູນລະບົບປະທານາທິບໍດີ ວາລະ 4 ປີ ແລະ ສາມາດລົງສະໝັກຮັບເລືອກຕັ້ງອີກ 1 ສະໄໝ, ພ້ອມກັບເພີ່ມອຳນາດໃຫ້ແກ່ສະພາແຫ່ງຊາດ; ແຫຼ່ງຂ່າວກ່າວວ່າ ອີ ເຊື່ອໝັ້ນວ່າຮູບແບບນີ້ໄດ້ຮັບການຍອມຮັບຈາກສາທາລະນະຊົນຢ່າງກວ້າງຂວາງທີ່ສຸດ ແລະ ເຂົາຍັງເຫັນດີກັບຄວາມກັງວົນກ່ຽວກັບການລວມຕົວຂອງອຳນາດພາຍໃຕ້ລະບົບທີ່ນັກວິຈານການເມືອງຂອງ ສ.ເກົາຫຼີ ມັກເອີ້ນວ່າ "ປະທານາທິບໍດີແບບຈັກກະພັດ".

ປັດຈຸບັນ, ປະທານາທິບໍດີ ສ.ເກົາຫຼີ ດຳລົງຕຳແໜ່ງໄດ້ພຽງວາລະດຽວ5 ປີ; ການປັບປຸງລັດຖະທຳມະນູນຕ້ອງໄດ້ຮັບສຽງສະໜັບສະໜູນຈາກສະມາຊິກສະພາແຫ່ງຊາດຢ່າງໜ້ອຍ 200 ຄົນ ຈາກທັງໝົດ 300 ທີ່ນັ່ງ ແລະ ຄວນອີງໃສ່ຄວາມເຫັນດີເປັນເອກະພາບທາງການເມືອງ.




## ສ້າງຄວາມເຂັ້ມແຂງ...

(ຕໍ່ຈາກໜ້າ 1)

ໂດຍການເປັນປະທານຂອງທ່ານ ກອງແກ້ວ ໄຊສິງຄາມ ຮອງປະທານສະພາແຫ່ງຊາດ ເຊິ່ງມີບັນດາທ່ານຮອງປະທານ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການ, ແລະ ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ທີ່ເປັນ ສສຂ ຈາກ 18 ແຂວງທົ່ວປະເທດ; ວິທະຍາກອນພາຍໃນ ແລະ ຕ່າງປະເທດ, ຄະນະຮັບຜິດຊອບແລະກອງເລຂາຊ່ວຍວຽກກອງປະຊຸມ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະ ຊ່ຽວຊານຂອງອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ປະຈຳ ສປປລາວ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ແລະ ແຂກຖືກເຊີນ ເຂົ້າຮ່ວມຫຼາຍກວ່າ140ທ່ານ.

ທ່ານ ກອງແກ້ວ ໄຊສິງຄາມ ກ່າວວ່າ: ການເຝິກອົບຮົມຄັ້ງນີ້ຖືເປັນໂອກາດດີໃນການຍົກສູງຄວາມຮູ້ຄວາມສາມາດ, ທັກສະ ແລະ ປະສົບການ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໄດ້ຢ່າງມີປະສິດທິຜົນ; ການມີຄວາມຮູ້ທີ່ແໜ້ນແກ່ນ, ເຂົ້າໃຈບົດບາດ ແລະ ໜ້າທີ່ຢ່າງຖືກຕ້ອງ, ມີທັກສະໃນການປະຕິບັດວຽກ, ແລະ ສາມາດປະສານງານກັບພາກສ່ວນຕ່າງໆໄດ້ດີ ຈະເປັນພື້ນຖານສຳຄັນໃນການຍົກສູງຄຸນນະພາບແລະປະສິດທິຜົນຂອງວຽກງານສະພາຢູ່ທ້ອງຖິ່ນ. ພ້ອມກັນນັ້ນ, ການນຳເອົາບາງບົດຮຽນຈາກຕ່າງປະເທດມາແລກປ່ຽນໃນຄັ້ງນີ້ ກໍເປັນປະໂຫຍດຢ່າງຍິ່ງ ເພາະແຕ່ລະປະເທດມີພາລະບົດບາດ, ລະບົບ ແລະ ເງື່ອນໄຂທີ່ແຕກຕ່າງກັນ; ການສຶກສາບົດຮຽນຈາກສາກົນ ຈຶ່ງຄວນເນັ້ນການປຽບທຽບ ແລະເລືອກເຟັ້ນສິ່ງທີ່ເໝາະສົມ ມາໝູນໃຊ້ເຂົ້າກັບສະພາບຕົວຈິງຂອງສປປລາວ.

ກອງປະຊຸມໄດ້ຮັບຟັງການສະເໜີບົດຮຽນ 7 ຫົວຂໍ້: 1. ພາລະບົດບາດ, ຄວາມຮັບຜິດຊອບ ແລະ ທິດທາງໃນຕໍ່ໜ້າ ຂອງ ສສຂ; 2. ການເຮັດວຽກຂອງ ສສຂ ທີ່ມີປະສິດທິພາບ: ປະສົບການຈາກສາກົນ ແລະ ບົດຮຽນຈາກການເຮັດວຽກຕົວຈິງ; ການສະໜັບສະໜູນວຽກງານບຸລິມະສິດການພັດທະນາລະດັບຊາດ ແລະ ແຂວງ; 3. ການຕິດຕາມກວດກາຕົວຈິງຂອງສະພາປະຊາຊົນຂັ້ນແຂວງ: ເຄື່ອງມື, ກົນໄກ ແລະການຕິດຕາມກວດກາດ້ານງົບປະມານ; 4. ການພົບປະ ແລະ ການມີສ່ວນຮ່ວມກັບປະຊາຊົນ, ການສື່ສານຂອງສະພາ: ປະສົບການຂອງສາກົນແລະເຄື່ອງມືທີ່ນຳໃຊ້ຕົວຈິງ; 5. ນະວັດຕະກຳ ແລະ ຫັນປ່ຽນເປັນດິຈິຕອນສຳລັບສສຂ: ການນຳໃຊ້ປັນຍາປະດິດ (AI), ເຝິກປະຕິບັດ ແລະ ສົນທະນາ ລວມທັງການນຳສະເໜີ;6.ວຽກງານຕິດຕາມກວດກາຜ່ານການພັດທະນາແລະນຳໃຊ້ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ; 7. ການວາງແຜນສຳລັບການພັດທະນາ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ຈັດກຸ່ມສົນທະນາຕາມຄຳຖາມແຕ່ລະຫົວຂໍ້, ນຳສະເໜີແຜນ ແລະ ບົດຮຽນ ຈາກຕາງໜ້າຂອງແຕ່ລະກຸ່ມ.

**(ສອນສັກ ວັນວິໄຊ)**




*#ບ່າວກະບື*

**ເຮົາ**ຢາກຊື້ດອກໄມ້ໄປມອບໃຫ້ແມ່ຍິງທີ່ເຮົາຮັກ, ແຕ່ເມຍເຮົາພັດບໍ່ອະນຸຍາດ.

***#BAOKBU***

I'd like to buy some flowers for the woman I love, but my wife won't let me.

## ສະຖານທູດ...

(ຕໍ່ຈາກໜ້າ 1)

ຍົກໃຫ້ເຫັນຜົນງານອັນພົ້ນເດັ່ນຂອງສິງກະໂປຕະຫຼອດໄລຍະ 61 ປີຜ່ານມາ ເປັນຕົ້ນຄວາມສາມັກຄີທາງສັງຄົມ, ສະຖຽນລະພາບທາງການເມືອງ, ການເຕີບໂຕ ແລະ ການພັດທະນາທາງເສດຖະກິດຢ່າງຕໍ່ເນື່ອງ. ທ່ານຍັງໃຫ້ຮູ້ອີກວ່າ: ສ.ສິງກະໂປແລະສປປລາວເປັນປະເທດທີ່ມີຄວາມຄ້າຍຄືກັນ ແລະ ເປັນຄູ່ຮ່ວມງານທີ່ໃກ້ຊິດໃນເວທີອາຊຽນ, ພວກເຮົາເຮັດວຽກເພື່ອຜົນປະໂຫຍດຮ່ວມກັນ, ຊຸກຍູ້ໃຫ້ເສດຖະກິດໃນພາກພື້ນມີການເຊື່ອມໂຍງ, ໝັ້ນຄົງ ແລະ ເປີດກວ້າງ. ການພັດທະນາຊັບພະຍາກອນມະນຸດ ແມ່ນຮາກຖານສຳຄັນຂອງການຮ່ວມມືສອງຝ່າຍ; ມາຮອດປັດຈຸບັນ, ພະນັກງານ-ລັດຖະກອນລາວເກືອບ 18,000 ຄົນ ໄດ້ເຂົ້າຮ່ວມເຝິກອົບຮົມຫຼັກສູດຕ່າງໆ ເຊັ່ນການເສີມສ້າງຄວາມເຂັ້ມແຂງ ແລະ ການພັດທະນາວິຊາຊີບພາຍໃຕ້ໂຄງການຮ່ວມມືສິງກະໂປ (SCP), ການແລກປ່ຽນຄວາມຮູ້ຢ່າງຕໍ່ເນື່ອງ ຍັງຊ່ວຍເສີມສ້າງຄວາມເຂັ້ມແຂງທາງດ້ານການບໍລິຫານ, ສົ່ງເສີມການຫັນປ່ຽນສູ່ດິຈິຕອນ ແລະ ພັດທະນາທັກສະດ້ານເຕັກນິກໃນຫຼາຍຂະແໜງການຂອງ ສປປລາວ.

**ຜູ້ຊີ້ນຳ**

ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

**ຄະນະຂັນນາທິການ**

ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງຂັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ